# OCRA

ສໍານັກງານສົ່ງເສີມສິດທິຂອງຜູ້ຮັບບໍລິການ (OCRA, Office of Clients' Rights Advocacy) ແມ່ນສໍານັກງານທີ່ມີຢູ່ທົ່ວໄປ ທີ່ດໍາເນີນການໂດຍ Disability Rights California, ເຊິ່ງເມື່ອກ່ອນແມ່ນ Protection & Advocacy, Inc., ໂດຍມີສັນຍາກັບ California Department of Developmental Services. OCRA ຈ້າງຜູ້ສົ່ງເສີມສິດທິຂອງຜູ້ຮັບບໍລິການ (CRA, Clients' Rights Advocate) ໃນແຕ່ລະສູນບໍລິການທ້ອງຖິ່ນ. CRA ແມ່ນບຸກຄົນທີ່ໄດ້ຮັບການຝຶກຝົນມາເພື່ອຊ່ວຍປົກປ້ອງສິດທິຂອງຜູ້ທີ່ຂາດຄວາມສາມາດ-
ໃນການພັດທະນາຕົນເອງ.

## ແມ່ນໃຜສາມາດຮັບບໍລິການດ້ານການສົ່ງເສີມສິດທິຂອງຜູ້ຮັບບໍລິການ?

ບຸກຄົນໃດໜຶ່ງທີ່ຂາດຄວາມສາມາດ, ສະມາຊິກໃນຄອບຄົວ, ຫຼືບຸກຄົນທີ່ສົນໃຈກໍ່ອາດຈະຖາມ CRA ກ່ຽວກັບສິດທິຂອງບຸກຄົນທີ່ຂາດຄວາມສາມາດໃນການພັດທະນາຕົນເອງໄດ້. ທາງ CRA ຈະຕອບຄໍາຖາມຂອງທ່ານ ຫຼື ສົ່ງທ່ານຕໍ່ໃຫ້ພະແນກອື່ນ.

## ການສົ່ງເສີມສິດທິຂອງຜູ້ຮັບບໍລິການ (CRA) ຂອງທ່ານ:

- ສາມາດໄປປຶກສາ ແລະ ຊ່ວຍຄົນທີ່ຂາດຄວາມສາມາດໃນການພັດທະນາຕົນເອງ ແລະ ຄອບຄົວຂອງເຂົາເຈົ້າເພື່ອໃຫ້ໄດ້ຮັບການບໍລິການ.
- ສາມາດເປັນຕົວແທນໂດຍກົງໃຫ້ແກ່ບຸກຄົນທີ່ທີ່ຂາດຄວາມສາມາດໃນການພັດທະນາຕົນເອງໃນການພິຈາລະນາຄະດີທາງການປົກ ຄອງ.
- ສາມາດໃຫ້ການຝຶກອົບຮົມກ່ຽວກັບສິດທິຂອງຜູ້ຊົມໃຊ້-, ຄອບຄົວຂອງພວກເຂົາ-ເຈົ້າ, ຜູ້ໃຫ້ບໍລິການໃນສູນບໍລິການທ້ອງຖິ່ນ, ແລະ ກຸ່ມຊຸມຊົນທີ່ມີຄວາມສົນໃຈ.
- ສາມາດສືບສວນການຮ້ອງທຸກກ່ຽວກັບການຖືກປະຕິເສດສິດທິຕ່າງໆທີ່ຜູ້ຊົມໃຊ້ມີສິດໃນການຮ້ອງທຸກ, ຖ້າຫາກການຮ້ອງທຸກກ່ຽວຂ້ອງກັບອົງກອນ-ໃດໜຶ່ງ.
- ສາມາດຮັບຮອງການປະຕິບັດຕາມກົດໝາຍກ່ຽວກັບການປະຕິເສດສິດທິໃນອົງກອນໃດໜຶ່ງ.

*ທ່ານອາດຈະຮ້ອງທຸກ ຖ້າຫາກວ່າທ່ານບໍ່ພໍໃຈຕໍ່ກັບການບໍລິການຂອງ OCRA ທີ່ໃຫ້ກັບທ່ານ.*

## ແມ່ນ ບັນຫາດ້ານການບໍລິການ/ໜ່ວຍງານ ອັນໃດທີ່ CRA ຂອງຂ້າພະເຈົ້າສາມາດ ຊ່ວຍຂ້າພະເຈົ້າໄດ້?

ບັນດາໂຮງຮຽນ
ການປະກັນສັງຄົມ
Medi-Cal
ການລະເລີຍ
ການຟື້ນຟູສຸຂະພາບຈິດ
ການເລືອກປະຕິບັດ
ສູນບໍລິການທ້ອງຖິ່ນ
ການບໍລິການໃນເຮືອນ
ປະກັນ-ໄພຂອງເອກະຊົນ
ການປົກປັກຮັກສາ
ການໃຊ້ຄວາມຮຸນແຮງ
ການລ້ຽງເດັກຕອນກາງເວັນ
ບັນຫາອາດຊະຍາກໍາ
ທະນາຍສ່ວນຕົວ
ການສະຫງວນ ແລະ
ທາງເລືອກອື່ນໆ
ບັນດາຂົງເຂດອື່ນໆທາງດ້ານກົດໝາຍ

## CRA ຈະຕັດສິນໃຈແນວໃດວ່າຈະເປັນຕົວແທນໂດຍກົງໃຫ້ຂ້າພະເຈົ້າ ຫຼືບໍ່?

ໃນການທີ່ຕັດສິນວ່າຈະເປັນຕົວແທນຂອງທ່ານໂດຍກົງນັ້ນ, ທາງ OCRA ຈະພິຈາລະນາ:

- ຄຸນຄ່າຂອງການຮ້ອງຮຽນຂອງທ່ານ
- ຄວາມສາມາດໃນການສົ່ງເສີມຕົວທ່ານເອງ
- ຊັບສິນຂອງ OCRA ທີ່ມີຢູ່
- ຊັບສິນທີ່ໃຊ້ສົ່ງເສີມອື່ນໆທີ່ທ່ານສາມາດໃຊ້

# ແລະ ຜູ້ສົ່ງເສີມສິດທິຂອງຜູ້ຮັບບໍລິການ (CRA) ຂອງທ່ານສາມາດເຮັດຫຍັງໄດ້ ໃຫ້ແກ່ທ່ານ?

**www.disabilityrightsca.org**

ຊື່ ແລະ ເບີໂທລະສັບຂອງ CRA ຂອງທ່ານແມ່ນ:

ຫຼືທ່ານສາມາດໂທ:

**1-800-390-7032**

ຟັງສຽງ **916-575-1615**

TTY (ໂທລະສັບສໍາລັບຄົນຫູໜວກ) **877-669-6023**

ແຟັກ **916-575-1623**

*ງານສິນລະປະຂອງ Bob Sulin ໄດ້ຕົບແຕ່ງໜ້າປົກ. ຜູ້ອາໄສຢູ່ Sacramento ຜູ້ໜຶ່ງ, ສິນລະປະຂອງ Sulin ໄດ້ນໍາໄປສະແດງຢູ່ງານວາງສະແດງທົ່ວລັດ California. ລາວເຮັດວຽກສ່ວນໃຫຍ່ກ່ຽວກັບການ-ແຕ້ມ, ເຄື່ອງປັ້ນດິນເຜົາ ແລະ ການຕີພິມຕົວອັກສອນໃຫຍ່, ແລະໄດ້ກາຍເປັນຄົນທີ່ມີຊື່ສຽງສໍາລັບການຕະຫຼົກແບບໜ້າຕາເສີຍໆ ແລະ ບົດປະພັນສຽດສີການເມືອງຂອງລາວ. Sulin ເປັນນັກສຶກສາຢູ່ Short Center North ແລະ ເປັນຜູ້ຊົມໃຊ້ຜູ້ໜຶ່ງຂອງ Alta California Regional Center.*

ການຈັດພິມ #5015.01

ກວດແກ້ຄືນ ຕຸລາ 2008

Publication #5015.12 Laotian

# ສໍານັກງານການສົ່ງເສີມສິດທິຂອງຜູ້ຮັບບໍລິການ (CRA) ແມ່ນຫຍັງ?

